**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນວິສາຫະກິດ

0122 - - - -
ເລກທີ /ກທວ

ນະຄອນຫລວງວຽງຈັນ, ວັນທີ ໐໗ ພຶດສະພາ 2025

# ແຈ້ງການ

ເຖິງ: ພາກລັດ-ພາກເອກະຊົນ ໃນຂອບເຂດທົ່ວປະເທດ;

ເລື່ອງ: ເປີດບໍລິການແຈ້ງສື່ມວນຊົນໃນວຽກງານທະບຽນວິສາຫະກິດ ຜ່ານເວັບໄຊຖານຂໍ້ມູນວິສາຫະກິດແຫ່ງຊາດ (www.ned.moic.gov.la).

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມທະບຽນວິສາຫະກິດ ສະບັບເລກທີ 2078/ອຄ, ລົງວັນທີ 15 ພະຈິກ 2023;
- ອີງຕາມ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດວຽກງານທະບຽນວິສາຫະກິດ ສະບັບເລກທີ 2406/ອຄ, ລົງວັນທີ 22 ທັນວາ 2023.

ເພື່ອອຳນວຍຄວາມສະດວກ ໃຫ້ຫົວໜ່ວຍທຸລະກິດ ຈັດຕັ້ງປະຕິບັດວຽກງານທະບຽນວິສາຫະກິດ ສອດຄ່ອງຕາມມາດຕາ 36, 55, 56, 58, 118, 159, 160 ຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍ້ (7), (11) ຂອງໂລແມັງ V ແລະ ຂໍ້ (4) ຂອງໂລແມັງ X ຂອງຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດວຽກງານທະບຽນວິສາຫະກິດ. ກົມທະບຽນວິສາຫະກິດ ຈະໄດ້ເປີດຮັບບໍລິການລົງແຈ້ງສື່ມວນຊົນຂອງວິສາຫະກິດ ທີ່ມີຈຸດປະສົງຫຼຸດທຶນຈົດທະບຽນ, ຄວບ ຫຼື ແຍກວິສາຫະກິດ ແລະ ການຍຸບເລີກວິສາຫະກິດ ຜ່ານເວັບໄຊຖານຂໍ້ມູນວິສາຫະກິດແຫ່ງຊາດ (www.ned.moic.gov.la) ນັບແຕ່ມື້ນີ້ເປັນຕົ້ນໄປ ລາຍລະອຽດດັ່ງລຸ່ມນີ້:

1) ຮັບບໍລິການແຈ້ງກ່ຽວກັບວຽກງານທະບຽນວິສາຫະກິດ, ຄ່າບໍລິການ200.000ກີບ/ຄັ້ງ(ສອງແສນກີບຕໍ່ໜຶ່ງຄັ້ງ); ພ້ອມກັນນັ້ນຍັງຮັບຝາກໂລໂກໂຄສະນາ ຂອງວິສາຫະກິດເພື່ອໂຄສະນາໃນ ເວັບໄຊຖານຂໍ້ມູນວິສາຫະກິດແຫ່ງຊາດ.

ດັ່ງນັ້ນ, ຈຶ່ງແຈ້ງມາ ເພື່ອຊາບ ແລະ ນຳໃຊ້ການບໍລິການດັ່ງກ່າວຕາມຄວາມສະດວກ.

**ຫົວໜ້າກົມ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນວິສາຫະກິດ

**ອະພິສິດ ແສງສຸລິວົງ**

ຜູ້ປະສານງານ:
- ທ່ານ ຂາວ ພົມວົງໄຊ 020 54566669
- ນາງ ຈິນຕະນາ ໄຊດາລາສຸກ 020 58397671

Scanned with CamScanner